# ຈະສ້າງໂອກາດໃຫ້ມີຄວາມເທົ່າທຽມກັນແນວໃດ ລະຫວ່າງຜູ້ຍິງ ກັບຜູ້ຊາຍ ໃນການຄຸ້ມຄອງປ່າໄມ້?



**"ບົດບາດຍິງ-ຊາຍ"** ແມ່ນຄຸນລັກສະນະ, ບົດບາດ, ຄວາມຮັບຜິດຊອບ ແລະ ພຶດຕິກຳທີ່ສ້າງຂຶ້ນ ໂດຍສັງຄົມ ແລະ ວັດທະນະທຳ ເຊິ່ງເຮັດໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງຍິງ ແລະ ຊາຍ.

*ເພາະສະນັ້ນ,ບົດບາດຍິງຊາຍຈຶ່ງບໍ່ໄດ້ກຳນົດຕາຍຕົວ, ແຕ່ມີຜົນຕໍ່ການເຄື່ອນໄຫວ ແລະ ປັບປຸ່ງຕາມ ສະພາບການປ່ຽນແປງຂອງສັງຄົມ*



ບົດບາດ, ຄວາມຮັບຜິດຊອບ

ຄວາມຕ້ອງການ, ຄວາມສົນໃຈ

ຄວາມຮູ້, ຄວາມຄິດເຫັນ



**"ການເຊື່ອມບົດບາດຍິງ-ຊາຍ"** ຕ້ອງພິຈາລະນາເຖິງ ຄວາມແຕກຕ່າງ ແລະ ຄວາມສຳຄັນຂອງບົດບາດ, ຄວາມຮັບຜິດຊອບ, ຄວາມສົນໃຈ, ທັດສະນະ ແລະ ຄວາມຄິດເຫັນ ຂອງຜູ້ຍິງ ແລະ ຜູ້ຊາຍ ຕ້ອງໄດ້ເຊື່ອມເຂົ້າໃນວຽກງານການຄຸ້ມຄອງປ່າໄມ້

Norad

RECOFTC
THE CENTER FOR PEOPLE AND FORESTS

แຜ່ນໂຄສະນາທີ 3:

# ຈະສ້າງໂອກາດໃຫ້ມີຄວາມເທົ່າທຽມກັນແນວໃດ ເພື່ອທີ່ຈະເຊື່ອມໂຍງບົດບາດ ຍິງ-ຊາຍ ເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງໄດ້?

## ເນື້ອໃນຂອງແຜ່ນໂຄສະນາ:

ການເອົາແຜ່ນໂຄສະນາສອງແຜ່ນ ທີ່ກ່າວມາຂ້າງເທິງ ເຂົ້າຮ່ວມກັນ ຈະຊ່ວຍໃຫ້ເຂົ້າໃຈຄວາມໝາຍຂອງຄຳວ່າ "ບົດບາດຍິງ-ຊາຍ" ພ້ອມທັງຄວາມສຳຄັນຂອງມັນ ສຳລັບການວາງແຜນ ຄຸ້ມຄອງວຽກງານປ່າໄມ້ໃນຂັ້ນທ້ອງຖິ່ນ.

## ຄຳອະທິບາຍກ່ຽວກັບແຜ່ນໂຄສະນາ:

ພິຈາລະນາເຖິງ ຜູ້ຍິງ ແລະ ຜູ້ຊາຍ ມີບົດບາດ ແລະ ຄວາມຮັບຜິດຊອບກ່ຽວກັບການຄຸ້ມຄອງປ່າໄມ້ ທີ່ແຕກຕ່າງກັນ, ເພາະສະນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ອະທິບາຍໃຫ້ມີຄວາມເຂົ້າໃຈ ກ່ຽວກັບຄຳວ່າ "ບົດບາດຍິງ-ຊາຍ" ແລະ "ການເຊື່ອມບົດບາດຍິງ-ຊາຍ". ຮູບແຕ້ມ ແລະ ແຜນຜັງໂຄງສ້າງ ຈະສາມາດຊ່ວຍໃຫ້ເຂົ້າໃຈ ສະພາບທ້ອງຖິ່ນໄດ້.

## ນິຍາມຂອງຄຳສັບ "ບົດບາດຍິງ-ຊາຍ" ແລະ "ການເຊື່ອມບົດບາດຍິງ-ຊາຍ" ມີດັ່ງລຸ່ມນີ້:

**"ບົດບາດຍິງຊາຍ"** ແມ່ນຄຸນລັກສະນະ, ບົດບາດ, ຄວາມຮັບຜິດຊອບ ແລະ ພຶດຕິກຳທີ່ສ້າງຂຶ້ນ ໂດຍສັງຄົມ ແລະ ວັດທະນະທຳ ເຊິ່ງເຮັດໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງຊາຍ ແລະ ຍິງ., ບົດບາດຍິງ-ຊາຍ ບໍ່ຄືກັນກັບເພດ. ເພດ ກຳນົດຂຶ້ນໂດຍທາງຊີວະສາດ ແລະ ເປັນພຽງລັກສະນະ ໜຶ່ງຂອງເພດນຶ່ງເທົ່ານັ້ນ. ພຶດຕິກຳ ແລະ ທັດສະນະຄະຕິຂອງ ບົດບາດຍິງ-ຊາຍ ແມ່ນຮຽນຮູ້ໄດ້ ຫລື ຊອກຮູ້ໄດ້, ບໍ່ຕາຍຕົວ ແລະ ກໍ່ບໍ່ເຫມືອນກັນທັງຫມົດ.

**"ການເຊື່ອມບົດບາດຍິງ-ຊາຍ"** ພິຈາລະນາເຖິງຄວາມແຕກຕ່າງ ແລະ ຄວາມສຳຄັນຂອງບົດບາດ, ຄວາມຮັບຜິດຊອບ ແລະ ຄວາມສົນໃຈຂອງຜູ້ຍິງ ແລະ ຜູ້ຊາຍ ໃນວຽກງານການຄຸ້ມຄອງ ປ່າໄມ້, ທັດສະນະ ແລະ ຄວາມຄິດເຫັນ ຂອງທັງສອງເພດ ຕ້ອງໄດ້ເຊື່ອມເຂົ້າໃນການອອກແບບ, ວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມ-ກວດກາປະເມີນຜົນໂຄງການ, ແຜນງານ ແລະ ນະໂຍບາຍເພື່ອໃຫ້ທັງຍິງ ແລະ ຊາຍມີສ່ວນຮ່ວມຢ່າງເທົ່າທຽມກັນ ແລະ ໄດ້ຮັບຜົນປະໂຫຍດທີ່ເປັນທຳ ຈາກວຽກງານການຄຸ້ມຄອງປ່າໄມ້. ຂະບວນການນີ້ ເອີ້ນວ່າ ການເຊື່ອມ ບົດບາດຍິງ-ຊາຍ. ການເຊື່ອມບົດບາດຍິງ-ຊາຍ ບໍ່ແມ່ນພຽງແຕ່ການມີສ່ວນຮ່ວມ ຫລື ເຂົ້າຮ່ວມຂອງແມ່ຍິງໃນກິດຈະກຳຕ່າງໆ ເທົ່ານັ້ນ, ແຕ່ຫມາຍເຖິງ ການເຂົ້າຮ່ວມຢ່າງຕັ້ງໜ້າ ແລະ ມີຄວາມໝາຍ ຂອງທັງຜູ້ຍິງ ແລະ ຜູ້ຊາຍ ນຳ.

## ປະເດັນສຳຄັນ ທີ່ຜູ້ອຳນວຍຄວາມສະດວກ ຄວນຈະນຳໄປຖ່າຍທອດ:

- ພາກສ່ວນທີ່ກ່ຽວຂ້ອງ ຕ້ອງເຂົ້າໃຈແນວຄວາມຄິດພື້ນຖານຂອງຄຳວ່າ "ບົດບາດຍິງ-ຊາຍ" ແລະ "ການເຊື່ອມບົດບາດຍິງ-ຊາຍ" ແລະ ຜູ້ອຳນວຍຄວາມສະດວກ ຄວນປັບເນື້ອໃນໃຫ້ ສອດຄ່ອງກັບສະພາບທ້ອງຖິ່ນ ເພື່ອໃຫ້ເຂົ້າໃຈໄດ້ງ່າຍຂຶ້ນ.

- ບົດບາດຍິງ-ຊາຍ ສາມາດອະທິບາຍ ເຖິງຄວາມແຕກຕ່າງ ໃນການຕັດສິນໃຈ ແລະ ການປະພຶດຂອງຜູ້ຍິງ ເຊິ່ງພົວພັນກັບຄວາມຮັບຜິດຊອບຂອງພວກເຂົາເຈົ້າໃນລະດັບ ຄົວເຮືອນ. ດັ່ງນັ້ນ, ຄວາມຕ້ອງການ ແລະ ຄວາມຮູ້ຂອງເຂົ້າເຈົ້າຕໍ່ຜົນຜະລິດປ່າໄມ້ (ລວມທັງ ເຂົາເຈົ້າ ຈະຄຸ້ມຄອງແນວໃດ) ຈະຂຶ້ນຢູ່ກັບຜົນປະໂຫຍດ ແລະ ການນຳໃຊ້ ເຊັ່ນ ສະພາບ ທາງດ້ານສຸຂະພາບ ແລະ ໂພສະນາການຂອງລູກ. ໃນສັງຄົມ ທີ່ປົກຄອງແບບຄອບຄົວ, ຜູ້ຊາຍ ເປັນຜູ້ຫາລ້ຽງຄອບຄົວ ແລະ ເປັນແຮງງານຕົ້ນຕໍໃນຄອບຄົວ.

- ຄວນກຳນົດ ແລະ ວິເຄາະບົດບາດຂອງຜູ້ຍິງ ແລະ ຜູ້ຊາຍ ລະອຽດໃນທຸກໆຂັ້ນຕອນຂອງວຽກງານການຄຸ້ມຄອງປ່າໄມ້ ເຊິ່ງເລີ່ມຕົ້ນຈາກການວາງແຜນ, ຈັດຕັ້ງປະຕິບັດ, ຕິດຕາມ-ກວດກາ ແລະ ປະເມີນຜົນ ເພື່ອກໍ່ໃຫ້ເກີດໂອກາດ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳໃຫ້ທັງຍິງ ແລະ ຊາຍ.

- ທຸກໆການປ່ຽນແປງຈາກການວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງປ່າໄມ້ ລ້ວນແລ້ວແຕ່ສົ່ງຜົນກະທົບຕໍ່ທັງຜູ້ຍິງ ແລະ ຜູ້ຊາຍ ຢ່າງແຕກຕ່າງກັນ.

**ຫມາຍເຫດ:**

*ເນື້ອໃນແຜ່ນໂຄສະນາ ເປັນພຽງຂໍ້ແນະນຳສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານເທົ່ານັ້ນ. ເພື່ອນຳໃຊ້ແຜ່ນໂຄສະນານີ້ໃນການຝຶກອົບຮົມຂັ້ນຮາກຖານ, ຜູ້ອຳນວຍຄວາມສະດວກ ສາມາດປັບໃຊ້ໄດ້ ຕາມສະຖານະການຕົວຈິງໃນທ້ອງຖິ່ນ.*

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບ ການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມ ໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

ການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ

ສະຫງວນລິຂະສິດ © ອົງການ RECOFTC ເດືອນຕຸລາ 2015

ບາງກອກ ປະເທດ ໄທ

ແຕ້ມໂດຍ: ທ່ານນາງ ຈູທາມາສ ປຣະມູນມາກ

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການ ສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນແຜ່ນໂຄສະນາ ສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ສຳລັບຂໍ້ມູນລາຍລະອຽດ, ກະລຸນາຕິດຕໍ່
ອົງການ RECOFTC ປະຈຳ ສປປ ລາວ
ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
ຫມາຍເລກໂທລະສັບ: 856 21 219512 ເວັບໄຊທ: www.recoftc.org

Norad

RECOFTC THE CENTER FOR PEOPLE AND FORESTS